BANMANIVONG et al. (2021). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 7. Issue 2. July – December 2021. Page 79 - 88

# ແນວທາງໃນການປັບໂຕຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ ຂະໜາດນ້ອຍ-ຂະໜາດກາງ ພາຍໃນ ແຂວງ ສະຫວັນນະເຂດ

**ລິດສະດາ ບານມະນີວົງ*, ສົມພອນ ວົງແກ້ວ, ຄໍາພັນ ຊຸມວິມານ, ທອງສາ ດູ່ນມະນີສອນ, ວັນສີສະໝອນ ອິນທະວີໄລ**

*ພາກວິຊາບໍລິຫານການຂົນສົ່ງ, ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ສປປ ລາວ*

***ຕິດຕໍ່ຜູ້ຂຽນ:** ລິດສະດາ ບານມະນີວົງ , ເບີໂທ: +856 20 2268 5858, ອີເມວ: LidQLKT1987@gmail.com ພາກວິຊາບໍລິຫານການຂົນສົ່ງ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ສປປ ລາວ*

***ຂໍ້ມູນບົດຄວາມ:***

*ການສົ່ງບົດຄວາມ: 03 ມິຖຸນາ 2021*

*ການປັບປຸງ: 22 ສິງຫາ 2021*

*ການຕອບຮັບ: 03 ກັນຍາ 2021*

**ບົດຄັດຫຍໍ້**

ການວິໄຈໃນຫົວຂໍ້ "ສຶກສາແນວທາງໃນການປັບໂຕຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ ຂະໜາດນ້ອຍ - ຂະໜາດກາງ ພາຍໃນແຂວງສະຫວັນນະເຂດ" ໂດຍມີຈຸດປະສົງ: ສຶກສາເຖິງສະພາບຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ, ບັນຫາທີ່ເປັນຜົນກະທົບຕໍ່ທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ ແລະ ກໍານົດແນວທາງໃນການປັບໂຕຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ. ການເກັບກໍາຂໍ້ມູນໂດຍການໃຊ້ແບບສອບຖາມ, ການວິເຄາະຂໍ້ມູນແມ່ນການໃຊ້ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ເພື່ອອະທິບາຍຜົນເຖິງລະດັບຄວາມສໍາຄັນ, ໂດຍການໃຊ້ກຸ່ມຕົວຢ່າງທັງໝົດແມ່ນ 17 ບໍລິສັດ ໃນປີ 2019 ຜົນການສຶກສາພົບວ່າ: ທຸລະກິດໃຫ້ບໍລິການຮັບຈ້າງຂົນສົ່ງສິນຄ້າອອກນອກປະເທດມີ 14 ບໍລິສັດ ກວມເອົາ 36.84% ແລະ ບໍລິສັດຂົນສົ່ງຮັບຈ້າງຂົນສິນຄ້າເຂົ້າມາໃນປະເທດມີ 12 ບໍລິສັດ ກວມເອົາ 31.58% ໃນນັ້ນແມ່ນນໍາໃຊ້ລະບົບຂົນສົ່ງແບບ (Transport Management System: TMS) ເທົ່າກັບ 12 ບໍລິສັດ ກວມເອົາ 44.44%, ນໍາໃຊ້ລະບົບ (Global Positioning System: GPS) ມີ 10 ບໍລິສັດ ກວມເອົາ 37.04%, ສໍາລັບການຂົນສົ່ງພາຍໃນແມ່ນຂົນສົ່ງແຕ່ ແຂວງ ສະຫວັນນະເຂດ ຫາ ນະຄອນຫຼວງວຽງຈັນ ເທົ່າກັບ 11 ບໍລິສັດ ກວມເອົາ 35.48%, ການຂົນສົ່ງລະຫວ່າງປະເທດ ແລະ ຜ່ານແດນ ແມ່ນຂົນສົ່ງໄປຍັງ ປະເທດໄທ ກວມເອົາອັດຕາສ່ວນຫຼາຍ ເທົ່າກັບ 14 ບໍລິສັດ ກວມເອົາເຖິງ 51.81% ແລະ ປະເທດ ສສ ຫວຽດນາມ ເທົ່າກັບ 13 ບໍລິສັດ ກວມເອົາ 48.14%, ສິນຄ້າທີ່ຂົນສົ່ງແມ່ນພືດພັນທາງການກະເສດ ເທົ່າກັບ 11 ບໍລິສັດ ກວມເອົາ 28.95%, ອຸປະກອນການກໍ່ສ້າງ ເທົ່າກັບ 9 ບໍລິສັດ ກວມເອົາ 23.68%. ບັນຫາທີ່ເປັນຜົນກະທົບຕໍ່ການດໍາເນີນທຸລະກິດແມ່ນຂາດການສະໜັບສະໜູນຈາກພາກລັດ, ໄລຍະເວລາໃນການຂົນສົ່ງຊັກຊ້າ, ການຈັດສັນບຸກຄະລາກອນ ແລະ ການສິ້ນເປືອງເຊື້ອໄຟ. ແນວທາງໃນການປັບໂຕຂອງທຸລະກິດດ້ານຂາດການສະໜັບສະໜູນຈາກພາກລັດແມ່ນລັດຖະບານຄວນປັບປຸງເສັ້ນທາງໃນການຈໍລະຈອນໃຫ້ສະດວກຂຶ້ນ, ລັດຖະບານ ຄວນໃຫ້ຄວາມຮ່ວມມືໃນການສົ່ງເສີມການຂົນສົ່ງສົ່ງພາຍໃນໃຫ້ຫຼາຍຂຶ້ນ, ລັດຄວນສ້າງສູນລວບລວມ ແລະ ສູນກະຈາຍສິນຄ້າ. ດ້ານໄລຍະເວລາໃນການຂົນສົ່ງຊັກຊ້າແມ່ນຄວນມີການຈັດແບ່ງພູມິພາກໃນການຂົນສົ່ງ, ຈັດຕາຕະລາງໃນການຂົນສົ່ງໄວ້ລ່ວງໜ້າ, ໃຊ້ຮູບແບບການຂົນສົ່ງໃຫ້ເໝາະສົມກັບເຂດພູມີພາກ ແລະ ສິນຄ້າ. ດ້ານບຸກຄະລາກອນແມ່ນອົງກອນຄວນຄັດເລືອກເອົາບຸກຄະລາກອນຜູ້ທີ່ມີຄວາມຮູ້ຄວາມຊໍານານເຂົ້າມາເຮັດວຽກໃນອົງກອນ, ຈັດການຝຶກອົບຮົມພະນັກງານພາຍໃນອົງກອນເປັນປະຈໍາ ແລະ ການສ້າງຂ້ອນກໍາລັງໃຈພະນັກງານ. ດ້ານການສິ້ນເປືອງເຊື້ອໄຟແມ່ນບໍລິສັດຄວນໃຫ້ບໍລິການຂົນສົ່ງສິນຄ້າທັງຂາໄປ ແລະ ຂາກັບເພື່ອຫຼຸດການແລ່ນລົດຖ້ຽວເປົ່າ, ການຂົນສົ່ງຖ້ຽວເຕັມຄັນ ແລະ ຄວນຄໍານວນເຊື້ອໄຟທີ່ຈະໃຊ້ໃນການຂົນສົ່ງຕາມພາຫະນະ ແລະ ເຂດພູມີສາດ.

**ຄໍາສໍາຄັນ:** *ແນວທາງໃນການປັບໂຕ, ທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ, ບັນຫາທີ່ເປັນຜົນກະທົບ.*

BANMANIVONG et al. (2021). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 7. Issue 2. July – December 2021. Page 79 - 88

# Guidance on the Adaptation for Medium-Sized Enterprises (SMEs) of Transportation Services in Savannakhet Province

**Lidsada BANMANIVONG *, Somphone VONGKEO, Khamphanh XOMVIMANE, Thongsa TOUNMANYSONE and Vansisamone INTHAVILAY**

*Department of Transportation Management, Faculty of Business administration, Savannakhet University, Lao PDR*

***Corresponding Author:***
*Lidsada BANMANIVONG*
*Tel: +856 20 2268 5858,*
*E-mail: LidQLKT1987@gmail.com*

*Department of Transportation Management, Faculty of Business administration, Savannakhet University Lao PDR*

***Article Info:***
*Submitted: Jun 03, 2021*
*Revised: Aug 22, 2021*
*Accepted: Sept 03, 2021*

**Abstract**

This research aimed to explores of the guidance on the adaptation for Medium-Sized Enterprises (SMEs) of transportation services the in Savannakhet Province". The objective of this study was to examine the overview of Medium-Sized Enterprises (SMEs) of transportation services and study the impacts on Medium-Sized Enterprises (SMEs) of transportation services.

Using a data collection as questionnaire with the frequency, percentage of data analysis to demonstrate significance value. In 2019, the research outcomes on study SME transportations overview found that 14 transport companies, 36.84% are exported transport services while 12 transport companies, 31.58% are serviced as the import transportation, the Transport Management System is organized by 12 transport companies, 44.44%, on the other hand 10 transport companies of 37.04% were operated with GPS (Global Positioning System). In a reason of domestic transportation within Savannakhet province to Vientiane capital city be totally 11 companies in 35.48%, the international transportation and transit cargo depart to Thailand from 14 companies of 51.81% incidentally, 13 transport companies are departed to Vietnam 48.14% as like agricultural commodities 28.95% from 11 transport companies and as alongside construction supply as 23.68% from 9 transport companies. Nonetheless, through studies of SME transportations problem impact found that lack of supportive governance structures, delays in arrival, personnel allocation, and fuel dissipation. While the conducting SME transportation services adaptation guidance is categorized to depend on problem impact as following: the government should support and doing cooperation especially the route facility infrastructure, a good contribute domestic transportation should possess the Collection and Distribution Center, having the transportation timetable in advanced, holding the suitable mode of transportation with features of area within the province and goods, carrying out the personnel management of human resources to schedule employee training and encouragement, decreasing empty shipments are decreasing fuel dissipation making the core computation is for each shipments of mode transportation, vehicles and location scheme.

**Keywords:** *Adaptation Guidance, Transportation Services Business, Problem Impact*

**1. ພາກສະເໜີ**

ມະນຸດທຸກຄົນມີຄວາມຕ້ອງການໃນດ້ານຕ່າງໆທີ່ບໍ່ຄືກັນ ແລະ ບໍ່ມີມື້ສິ້ນສຸດນັບຕັ້ງແຕ່ຄວາມຕ້ອງການທາງດ້ານອາຫານ, ເຄື່ອງນຸ່ງຮົ່ມ, ທີ່ຢູ່ອາໃສ, ຢາຮັກສາໂລກ ແລ້ວຍັງມີຄວາມຕ້ອງການທາງດ້ານອື່ນໆອີກເຊັ່ນ: ຄວາມປອດໄພ, ຄວາມໝັ້ນຄົງທີ່ຈະມີວຽກເຮັດງານທຳ, ມີສື່ສຽງໃນສັງຄົມ, ມີຄວາມເປັນຢູ່ທີ່ດີປາສະຈາກໂລກໄພຕ່າງໆ ເພື່ອໃຫ້ຄົນເຮົາດຳເນີນຊີວິດການເປັນຢູ່ທີ່ດີ. ດັ່ງນັ້ນ, ທຸລະກິດຂະໜາດນ້ອຍຖືວ່າເປັນທຸລະກິດພື້ນຖານເຂົ້າມາມີບົດບາດສ່ວນໜຶ່ງໃນການຕອບສະໜອງຄວາມຕ້ອງການຂອງຄົນໃນສັງຄົມ ແລະ ມີສ່ວນຊ່ວຍໃນການພັດທະນາປະເທດດ້ວຍ (ນັດທະພົນ ຊຸມແສງ, 1998). ໃນການດຳເນີນທຸລະກິດປັດຈຸບັນ ຜູ້ປະກອບການໄດ້ເວົ້າວ່າມີອົງປະກອບ ຫຼື ປັດໄຈຫຼາຍໆຢ່າງເປັນບັນຫາ ແລະ ອຸປະສັກທີ່ເຮັດໃຫ້ທຸລະກິດພັດທະນາ ຫຼື ຈະເລີນເຕີບໂຕຊ້າ ແລະ ແຂ່ງຂັນກັບທຸລະກິດຂະໜາດໃຫຍ່ບໍ່ໄດ້ ໂດຍສະເພາະໃນປະຈຸບັນມີທຸລະກິດຂະໜາດໃຫຍ່ຂອງຕ່າງປະເທດເຂົ້າມາລົງເປັນຈຳນວນຫຼາຍ ທຸລະກິດໃຫ້ບໍລິການຂົນສົ່ງກໍ່ຄືກັບທຸລະກິດອື່ນທີ່ໄດ້ຮັບຜົນກະທົບໃນດ້ານຕ່າງໆ ເຊິ່ງເຈົ້າຂອງທຸລະກິດເປັນຄົນທີ່ມີແຮງຈູງໃຈສູງ ແລະ ເຮັດວຽກຫຼາຍ, ມີຄວາມສອດຄ່ອງໃນດ້ານການບໍລິຫານ, ສາມາດປັບໂຕເຂົ້າກັບການປ່ຽນແປງໄດ້ງ່າຍ, ມີຕົ້ນທຶນໃນການດຳເນີນງານຕໍ່າກວ່າທຸລະກິດຂະໜາດໃຫຍ່ເພາະໃຊ້ແຮງງານໃນຄອບຄົວເປັນຫຼັກ ແລະ ມີເຄື່ອງມື, ເຄື່ອງຈັກແບບງ່າຍໆບໍ່ມີຄວາມຊັບຊ້ອນ ເປັນທຸລະກິດທີ່ສ້າງອາຊີບ ແລະ ລາຍໄດ້ໃຫ້ກັບເຈົ້າຂອງທຸລະກິດພໍຢູ່ໄດ້ ມີລາຍຮັບໜ້ອຍເມື່ອປຽບທຽບໃສ່ກັບທຸລະກິດຂະໜາດໃຫຍ່ ສາມາດໃຫ້ບໍລິການດ້ານການຂົນສົ່ງໄດ້ສະດວກສະບາຍ, ວ່ອງໄວ ແລະ ຄ່ອງແຄ້ວສູງ ລູກຄ້າເລືອໃຊ້ບໍລິການໄດ້ງ່າຍ ການບໍລິການຕ້ອງອາໃສຄວາມສາມາດ ແລະ ບຸກຄະລິກກະພາບຂອງຜູ້ປະກອບທຸລະກິດເປັນສິ່ງສຳຄັນ ຈຶ່ງເຮັດໃຫ້ສາມາດປັບໃຫ້ເຂົ້າກັບຄວາມຕ້ອງການຂອງທ້ອງຖິ່ນໄດ້ງ່າຍ (Sasakorn KRITSANASA-THIAN, 2013).

ການຂົນສົ່ງສິນຄ້າເປັນກິດຈະກຳທີ່ຈຳເປັນ ເນື່ອງຈາກວ່າແຫຼ່ງຜູ້ຜະລິດ ແລະ ແຫຼ່ງຜູ້ບໍລິໂພກບໍ່ໄດ້ຢູ່ບ່ອນດຽວກັນ. ດັ່ງນັ້ນ, ທຸລະກິດໃຫ້ບໍລິການການຂົນສົ່ງຈຶ່ງເຂົ້າມາເປັນຕົວຂັບເຄື່ອນສິນຄ້າຈາກແຫຼ່ງຜະລິດໄປຍັງແຫຼ່ງທີ່ມີຄວາມຕ້ອງການສິນຄ້ານັ້ນໆ ຊຶ່ງທີ່ຜ່ານມາມີທ່າອ່ຽງວ່າຜູ້ບໍລິໂພກມີຄວາມຕ້ອງການສິນຄ້າທີ່ມີຄຸນນະພາບ ແລະ ລະບົບການຂົນສົ່ງສິນຄ້າວ່ອງໄວ ສົ່ງຜົນໃຫ້ຜູ້ປະກອບການຂົນສົ່ງພັດທະນາຄຸນນະພາບການໃຫ້ບໍລິການ ແລະ ຈັດລະບົບຂົນສົ່ງສິນຄ້າຂອງຕົນໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຂອງລູກຄ້າໄດ້ຢ່າງທວງທັນເພື່ອຕອບສະໜອງຄວາມພໍໃຈໃນສິນຄ້າຄືຄຸນນະພາບຂອງບໍລິການທີ່ມາພ້ອມກັບຕົວຂອງສິນຄ້າ ການບໍລິຫານການຂົນສົ່ງທີ່ດີຈະຕ້ອງມີຄຸນນະພາບຂອງການໃຫ້ບໍລິການ. ສະນັ້ນ, ຜູ້ປະກອບການຈຶ່ງມີຄວາມຈຳເປັນຕ້ອງມີການພັດທະນາຮູບແບບການໃຫ້ບໍລິການເພື່ອໃຫ້ເປັນທີ່ພໍໃຈຂອງຜູ້ທີ່ເຂົ້າມາໃຊ້ບໍລິການ (ຈັດຕຸລົງ ເພີນທັດ, 2017).

ແຂວງ ສະຫວັນນະເຂດ ເປັນແຂວງໜຶ່ງທີ່ຕັ້ງຢູ່ພາກກາງ ຂອງປະເທດລາວ ເປັນແຂວງທີ່ມີເສດຖະກິດຂະຫຍາຍຕົງເປັນອັນດັບ 2 ຂອງປະເທດໂດຍມີອັດຕາການຈະເລີນເຕີບໂຕຂອງເສດຖະກິດ 9.52%, ຂະແໜງກະສິກຳເພີ່ມຂຶ້ນ 5.03% ກວມເອົາ 30.36% ຂອງ GDP, ຂະແໜງອຸດສາຫະກຳເພີ່ມຂຶ້ນ 12.01% ກວມເອົາ 35.92% ຂອງ GDP, ຂະແໜງການບໍລິການເພີ່ມຂຶ້ນ 11.1% ກວມເອົາ 33.72% ຂອງ GDP, ການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 238 ວິສາຫະກິດ , ມູນຄ່າການລົງທຶນທັງໝົດ 4,973.8 ຕື້ກີບ (ບົດສະຫຼຸບການນຳພາວຽກງານຮອບດ້ານປະຈຳປີ 2018 ຂອງແຂວງສະຫວັນນະເຂດ) ຈາກການເປີດກວ້າງການດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດເຮັດໃຫ້ຜູ້ປະກອບການເກີດມີການແຂ່ງຂັນລະຫວ່າງທຸລະກິດປະເພດດຽວກັນເກີດຂຶ້ນເພື່ອຄວາມຢູ່ລອດຂອງອົງກອນ ຜູ້ປະກອບການຕ້ອງມີການພັດທະນາອົງກອນເພື່ອສາມາດແຂ່ງຂັນກັບທຸລະກິດທັງພາຍໃນ ແລະ ຕ່າງປະເທດໄດ້.

ດັ່ງນັ້ນ, ເພື່ອຄວາມຢູ່ລອດຂອງທຸລະກິດໃຫ້ບໍລິການການຂົນສົ່ງສິນຄ້າພາຍໃນແຂວງສະຫວັນນະເຂດຜູ້ວິໄຈຈຶ່ງສົນໃຈທີ່ຈະສຶກສາໃນຫົວຂໍ້ແນວທາງໃນການປັບໂຕຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ ແລະ

ຂະໜາດກາງພາຍໃນ ແຂວງ ສະຫວັນນະເຂດ ໂດຍມີຈຸດປະສົງສຶກສາ: 1) ສຶກສາເຖິງສະພາບຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ, 2) ບັນຫາທີ່ເປັນຜົນກະທົບຕໍ່ທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ, 3) ການົດແນວທາງໃນການປັບໂຕຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນມີຈຳນວນທັງໝົດ 17 ບໍລິສັດ ເນື່ອງຈາກວ່າກຸ່ມປະຊາກອນມີຈຳນວນບໍ່ຫຼາຍ ເຊິ່ງບໍລິສັດຕ່າງໆທີ່ເປັນກຸ່ມຕົວຢ່າງແມ່ນນອນຢູ່ໃນ 4 ເມືອງຄື: ນະຄອນໄກສອນພົມວິຫານ, ເມືອງອຸທຸມພອນ, ເມືອງພີນ ແລະ ເມືອງເຊໂປນ ແຂວງ ສະຫວັນນະເຂດ ເຊິ່ງປະກອບມີບໍລິສັດຕ່າງໆດັ່ງນີ້: ບໍລິສັດອາລຸນລັດບໍລິຫານການຂົນສົ່ງ, ບໍລິສັດໂອແກ້ວຂົນສົ່ງ ຈຳກັດ, ບໍລິສັດຂົນສົ່ງສາກົນ ຈຳກັດ, ບໍລິສັດອຸດົມໄຊຂົນສົ່ງ ຈຳກັດ, ບໍລິສັດສະຫວັນໂລຈິສຕິກ ຈຳກັດ, ບໍລິສັດຊີໂນຂົນສົ່ງ ຈຳກັດ, ບໍລິສັດວັງປູລາວ ຈຳກັດ, ບໍລິສັດນະພາ ຂົນສົ່ງ, ບໍລິສັດບໍລິການຈັດສົ່ງສິນຄ້າພາຍໃນ-ຕ່າງປະເທດ ຈຳກັດ, ບໍລິສັດກັນລະຍາຂົນສົ່ງ ຈຳກັດ, ບໍລິສັດຈະເລີນໄຊຂົນສົ່ງ ຈຳກັດ, ບໍລິສັດອາ ຊ້ຽນທະວີຊັບຂົນສົ່ງ ຈຳກັດ ແລະ ບໍລິສັດວຽງໄຊຂົນສົ່ງ ຈຳກັດ.

### 2.2 ການເກັບກຳ ແລະ ລວບລວມຂໍ້ມູນ

ຂໍ້ມູນທີ່ນຳໃຊ້ເຂົ້າໃນການຄົ້ນຄ້ວາວິໄຈໃນຄັ້ງນີ້ເປັນຂໍ້ມູນມືໜຶ່ງທີ່ໄດ້ຈາກການລົງພາກສະໜາມຕົວຈິງ ໂດຍການສັງເກດ ແລະ ສຳພາດໂດຍໃຊ້ແບບສອບຖາມທີ່ໄດ້ກະກຽມໄວ້ ນຳຜູ້ປະກອບການທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າພາຍໃນ ແຂວງ ສະຫວັນນະເຂດ ເພື່ອໃຫ້ໄດ້ຂໍ້ມູນທີ່ແທ້ຈິງ ເພື່ອນຳມາວິເຄາະບັນຫາທີ່ມີຜົນກະທົບຕໍ່ການປະກອບທຸລະກິດໃນປະຈຸບັນ ເພື່ອຫາແນວທາງໃນການປັບປຸງ ເພື່ອໃຫ້ທຸລະກິດມີຄວາມສາມາດແຂ່ງຂັນກັບທຸລະກິດປະເພດດຽວກັນໄດ້.

### 2.3 ເຄື່ອງມືທີ່ນຳໃຊ້ໃນການສຶກສາ

ເຄື່ອງມືທີ່ນຳໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນການນຳໃຊ້ແບບສອບຖາມເຊິ່ງປະກອບມີທັງຄຳຖາມປາຍປິດ ແລະ ປາຍເປີດໂດຍແບ່ງອອກເປັນ 3 ພາກສ່ວນຄື:

ພາກສ່ວນທີ 1: ສະພາບຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດກາງ ແລະ ຂະໜາດນ້ອຍ ພາຍໃນແຂວງສະຫວັນນະເຂດ

ພາກສ່ວນທີ 2: ບັນຫາທີ່ເປັນຜົນກະທົບຂອງທຸລະກິດບໍລິການໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ ແລະ ຂະໜາດກາງພາຍໃນແຂວງສະຫວັນນະເຂດ.

ພາກສ່ວນທີ 3: ເພື່ອກຳນົດຫາແນວທາງການປັບໂຕກັບການແຂ່ງຂັນຂອງທຸລະກິດໃຫ້ບໍລິການການຂົນສົ່ງສິນຄ້າ ຂະໜາດນ້ອຍ ແລະ ຂະໜາດກາງໃນ ແຂວງສະຫວັນນະເຂດ.

### 2.4 ການວິເຄາະຂໍ້ມູນ

ການວິເຄາະຫາບັນຫາທີ່ເປັນຜົນກະທົບຕໍ່ທຸລະກິດ ແລະ ແນວທາງໃນການປັບໂຕຂອງທຸລະກິດໃຫ້ບໍລິການຂົນສິນຄ້າຂະໜາດນ້ອຍ-ຂະໜາດກາງນີ້ແມ່ນໂດຍການໃຊ້ຂໍ້ມູນມືໜຶ່ງຈາກແບບສອບຖາມທີ່ເປັນແບບປາຍປິດ ແລະ ປາຍເປີດ, ວິເຄາະໂດຍນຳໃຊ້ສະຖິຕິພັນລະນາໂດຍການຫາຄ່າຄວາມຖີ່ ແລະ ຄ່າສ່ວນຮ້ອຍ ໂດຍການອະທິບາຍລະດັບບັນຫາ ເພື່ອກຳນົດແນວທາງໃນການແກ້ໄຂ.

## 3. ຜົນໄດ້ຮັບ

### 3.1 ສະພາບຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ

ຈາກການສຶກສາເຫັນວ່າ ທຸລະກິດໃຫ້ບໍລິການຮັບຈ້າງຂົນສົ່ງສິນຄ້າອອກນອກປະເທດມີ 14 ບໍລິສັດ ກວມເອົາ 36.84% ແລະ ບໍລິສັດຂົນສົ່ງຮັບຈ້າງຂົນສິນຄ້າເຂົ້າມາໃນປະເທດມີ 12 ບໍລິສັດ ກວມເອົາ 31.58%, ໃນນັ້ນແມ່ນນຳໃຊ້ລະບົບຂົນສົ່ງແບບ (Transport Management System: TMS) ເທົ່າກັບ 12 ບໍລິສັດ ກວມເອົາ 44.44%, ນາໃຊ້ລະບົບ (Global Positioning System: GPS) ມີ 10 ບໍລິສັດ ກວມເອົາ 37.04%, ສາລັບການຂົນສົ່ງພາຍໃນແມ່ນຂົນສົ່ງແຕ່ແຂວງສະຫວັນນະເຂດຫານະຄອນຫຼວງວຽງຈັນ ເທົ່າກັບ 11 ບໍລິສັດ ກວມເອົາ 35.48%, ການຂົນສົ່ງລະຫວ່າງປະເທດ ແລະ ຜ່ານແດນ

ແມ່ນຂົນສົ່ງໄປຍັງ ປະເທດໄທເທົ່າກັບ 14 ບໍລິສັດ ກວມເອົາເຖິງ 51.81% ແລະ ປະເທດ ສສ ຫວຽດນາມ ເທົ່າກັບ 13 ບໍລິສັດ ກວມເອົາ 48.14%, ສິນຄ້າທີ່ຂົນສົ່ງແມ່ນພືດພັນທາງການກະເສດ ເທົ່າກັບ 11 ບໍລິສັດ ກວມເອົາ 28.95%, ອຸປະກອນການກໍ່ສ້າງ ເທົ່າກັບ 9 ບໍລິສັດ ກວມເອົາ 23.68%, ເຊິ່ງສະແດງອອກດັ່ງຕາຕະລາງ 1.

### 3.2 ບັນຫາທີ່ເປັນຜົນກະທົບຕໍ່ທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ

ຈາກການສຶກສາເຫັນວ່າ ບັນຫາທີ່ເປັນຜົນກະທົບຕໍ່ການດຳເນີນທຸລະກິດແມ່ນການຂາດການສະໜັບສະໜູນຈາກພາກລັດ ເທົ່າກັບ 19.74%, ດ້ານໄລຍະເວລາໃນການຂົນສົ່ງສິນຄ້າຊັກຊ້າ ຫຼື ເວລາໃນການຂົນສົ່ງຈຳກັດ ເທົ່າກັບ 18.42%, ດ້ານບຸກຄະລາກອນ ແລະ ການສິ້ນເປືອງເຊື້ອໄຟ 13.16%, ຂາດລະບົບການຈັດການການຂົນສົ່ງທີ່ດີໃນການປະກອບທຸລະກິດ ເທົ່າກັບ 10.53%, ພາຫະນະໃນການຈັດສົ່ງສິນຄ້າບໍ່ພຽງພໍ ເທົ່າກັບ 9.21%, ຂາດເຕັກໂນໂລຊີເພື່ອອຳນວຍຄວາມສະດວກຕໍ່ການຂົນສົ່ງ ເທົ່າກັບ 6.58%, ສິນຄ້າມີການເປ່ເພເສຍຫາຍ ຫຼື ສູນເສຍລະຫວ່າງການຂົນສົ່ງ ເທົ່າກັບ 5.26% ແລະ ລາຄາໃນການຈັດສົ່ງສິນຄ້າບໍ່ເປັນມາດຕະຖານ ເທົ່າກັບ 3.95%, ເຫດຜົນທີ່ບໍລິສັດໃຫ້ບໍລິການຂົນສົ່ງສິນຄ້າພາຍໃນ ແຂວງສະຫວັນນະເຂດ ພົບຂາດການສະໜັບສະໜູນຈາກພາກລັດເປັນຕົ້ນແມ່ນສິ່ງອຳນວຍຄວາມສະດວກໃນການກໍ່ສ້າງໂຄງລ່າງພື້ນຖານເຊັ່ນຖະໜົນຫົນທາງມີການເປ່ເພຫຼາຍ, ການຕັ້ງດ່ານຂອງເຈົ້າໜ້າທີ່, ການເຂົ້າເຖິງແຫຼ່ງຍັງມີຄວາມຈຳກັນ, ການດຶງດູດການລົງທຶນຂອງຕ່າງປະເທດເຂົ້າມາລົງທຶນເປັນຈຳນວນຫຼາຍເຮັດໃຫ້ທຸລະກິດພາຍໃນທີ່ເປັນທຸລະກິດຂະໜາດນ້ອຍບໍ່ສາມາດທີ່ຂະແຂ່ງຂັນທຸລະກິດຂະໜາດໃຫຍ່ໄດ້ ລັດຖະບານຄວນມີການຈຳກັດ ແລະ ຄວນມີການສົ່ງເສີມການລົງທຶນພາຍໃນໃຫ້ຫຼາຍຂຶ້ນ. ສະແດງອອກດັ່ງຕາຕໍາລາງທີ 2

### 3.3 ແນວທາງໃນການປັບຕົວຂອງທຸລະກິດ

#### 3.1.1 ແນວທາງໃນການແກ້ໄຂດ້ານບຸກຄະລາກອນ

ແກ້ໄຂດ້ານບຸກຄະລາກອນໃນອົງກອນຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ ພົບວ່າການຄັດເລືອກເອົາບຸກຄະລາກອນທີ່ມີຄວາມຊຳນານເຂົ້າມາເຮັດວຽກໃນອົງກອນ, ຈັດການຝຶກອົບຮົມ ແລະ ພັດທະນາຄຸນນະພາບພະນັກງານ , ການສ້າງຂວັນກຳລັງໃຈ ແລະ ການກຳນົດຕາແໜ່ງໜ້າທີ່ໃນການປະຕິບັດວຽກໃຫ້ຊັດເຈນ, ເຊື່ອມຄວາມສາມັກຄີແລກປ່ຽນຂໍ້ມູນຂ່າວສານການຂົນສົ່ງສິນຄ້າທັງພາຍໃນ ແລະ ພາຍນອກ, ການຈັດຜັງອົງກອນ, ສະນັ້ນແນວທາງໃນການປັບໂຕຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າພາຍໃນແຂວງ ສະຫວັນນະເຂດ ດ້ານບຸກຄະລາກອນເຫັນວ່າແຕ່ລະອົງກອນຄວນມີການຄັດເລືອກເອົາພະນັກງານເຂົ້າມາເຮັດວຽກຕ້ອງເລືອກເອົາຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີຄວາມຊຳນານໃນວຽກງານ ແລະ ຕ້ອງມີປະສົບການໃນການເຮັດດັ່ງກ່າວມາກ່ອນແລ້ວ ຈຶ່ງຈະບັນຈຸເຂົ້າວຽກງານດັ່ງກ່າວ, ລາຍລະອຽດສະແດງໃນຕາຕະລາງ 3.

#### 3.2.2 ແນວທາງໃນການແກ້ໄຂດ້ານຄວາມສິ້ນເປືອງເຊື້ອໄຟ

ແນວທາງໃນການແກ້ໄຂດ້ານຄວາມສິ້ນເປືອງເຊື້ອໄຟຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ ຕ້ອງຂົນສົ່ງສິນຄ້າທັງຂາໄປ ແລະ ຂາກັບ, ການຂົນສົ່ງທ່ຽວ, ຄຳນວນໄລຍະທາງ ແລະ ກຳນົດປະລິມານເຊື້ອເພີງທີ່ຈະໃຊ້ກ່ອນການຂົນສົ່ງ ແລະ ບັນທຶກເລກໄມລົດທັງຂາໄປ ແລະ ຂາກັບ. ສະນັ້ນ, ແນວທາງໃນການປັບໂຕເພື່ອແກ້ໄຂບັນຫາດ້ານຄວາມສິ້ນເປືອງເຊື້ອໄຟ ຜູ້ປະກອບການໃຫ້ບໍລິການຂົນສົ່ງສິນຄ້າຕ້ອງໃຫ້ມີການຂົນສົ່ງສິນຄ້າທັງຂາໄປ ແລະ ຂາກັບ ເພື່ອຫຼຸດການແລ່ນລົດຖ້ຽວເປົ່າ ແລະ ເພີ່ມປະສິດທິພາບໃນການຂົນສົ່ງຂຶ້ນໄດ້.

#### 3.3.3 ແນວທາງໃນການແກ້ໄຂດ້ານການຂາດການສະໜັບສະໜູນຈາກພາກລັດ

ແນວທາງໃນການແກ້ໄຂດ້ານການຂາດການສະໜັບສະໜູນຈາກພາກລັດ ຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ ຄືໃຫ້ລັດຖະບານປັບປຸງເສັ້ນທາງການຈໍລະຈອນເພື່ອສະດວກໃນການຂົນສົ່ງ, ຄວນໃຫ້ຄວາມຮ່ວມມືກັບລັດຖະບານໃນການສົ່ງເສີມການຂົນສົ່ງສິນຄ້າທັງພາຍໃນ ແລະ ຕ່າງປະເທດເພື່ອຍົກລະດັບມາດຕະຖານການຂົນສົ່ງທີ່ດີຂຶ້ນ, ໃຫ້ລັດຖະບານສ້າງສູນລວມ ແລະ ກະຈາຍສິນຄ້າທຸກແຂວງ ແລະ ທຸກປະເທດ, ໃຫ້ລັດຖະບານຈັດສ້າງ ແລະ ສົ່ງເສີມດ້ານການນຳລະບົບໂລຊິດສະຕິກມາໃຊ້ໃນການຂົນ

ສົ່ງ. ດັ່ງນັ້ນ, ແນວທາງໃນການແກ້ໄຂບັນຫາການຂາດການສະໜັບສະໜູນຈາກພາກລັດ ລັດຖະບານຄວນປັບປຸງເສັ້ນທາງການຈໍລະຈອນໃຫ້ໄດ້ມາດຕະຖານ, ຂະຫຍາຍເສັ້ນທາງໃຫ້ກວ້າງເພື່ອຫຼຸດໄລຍະເວລາໃນການແລ່ນລົດໃຫ້ໜ້ອຍລົງ ແລະ ເພີ່ມປະສິດທິພາບໃນການການຂົນສົ່ງທີ່ວ່ອງໄວສົ່ງຜົນໃຫ້ການສົ່ງມອບສິນຄ້າກົງຕໍ່ກັບເວລາ.

### 3.4.4 ແນວທາງໃນການແກ້ໄຂດ້ານການຂາດລະບົບການບໍລິຫານການຂົນສົ່ງ

ແນວທາງໃນການແກ້ໄຂດ້ານການຂາດລະບົບການບໍລິຫານການຂົນສົ່ງ ຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຄື: ຄວນເພີ່ມລະບົບການຂົນສົ່ງຈາກສູນກະຈາຍສິນຄ້າໄປເຖິງຜູ້ຮັບ (ຮັບສິນຄ້າຈາກສູນກະຈາຍສິນຄ້າ ສົ່ງໃຫ້ລູກຄ້າຈົນເຖິງປາຍທາງ), ການນໍາເອົາລະບົບ TMS ແລະ C-MOVE ມາໃຊ້, ເພີ່ມລະບົບຂົນສົ່ງຈາກຜູ້ຜະລິດເຖິງປາຍທາງ (ຮັບສິນຄ້າຈາກຕົ້ນທາງໄປເຖິງປາຍທາງ), ນໍາລະບົບໂລຈິສຕິກມາໃຊ້. ດັ່ງນັ້ນ, ແນວທາງໃນການແກ້ໄຂບັນຫາການຂາດລະບົບການບໍລິຫານການຂົນສົ່ງ ຂອງບໍລິສັດໃຫ້ບໍລິການຂົນສົ່ງສິນຄ້າຄວນເພີ່ມລະບົບຂົນສົ່ງຈາກສູນກະຈາຍສິນຄ້າໄປເຖິງຜູ້ຮັບ ( ຮັບສິນຄ້າຈາກສູນກະຈາຍສິນຄ້າສົ່ງໃຫ້ລູກຄ້າຈົນເຖິງປາຍທາງ) ເພື່ອເຮັດໃຫ້ຂະບວນການໃນການຂົນສົ່ງມີປະສິດທິພາບເຊັ່ນ: ຈຸດລວບລວມສິນຄ້າ, ຈຸດພັກສິນຄ້າ, ຈຸດກວດກາສິນຄ້າ ເພື່ອເຮັດໃຫ້ການຂົນສົ່ງມີປະສິດທິພາບຄືການສົ່ງມອບກົງຕໍ່ເວລາ, ສິນຄ້າເສຍຫາຍໜ້ອຍ, ສິນຄ້າທີ່ຖືກຕ້ອງ.

### 3.5.5 ແນວທາງໃນການແກ້ໄຂດ້ານສິນຄ້າມີຄວາມເປ່ເພເສຍຫາຍ ແລະ ສູນເສຍລະຫວ່າງການຂົນສົ່ງ

ແນວທາງໃນການແກ້ໄຂດ້ານສິນຄ້າມີຄວາມເປ່ເພເສຍຫາຍ ແລະ ສູນເສຍລະຫວ່າງການຂົນສົ່ງ ຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າເຊັ່ນ: ຕິດຕັ້ງລະບົບ GPS ໃນການຕິດຕາມ, ຄວບຄຸມການປະຕິບັດງານຂອງພະນັກ ງານຂົນສົ່ງສິນຄ້າ, ມີການຮັບສົ່ງສິນຄ້າຄົບຖ້ວນສົມບູນ 100%. ດັ່ງນັ້ນ, ເພື່ອແກ້ໄຂບັນຫາດ້ານສິນຄ້າມີຄວາມເປ່ເພເສຍຫາຍ ແລະ ສູນເສຍລະຫວ່າງການຂົນສົ່ງ ທຸລະກິດໃຫ້ບໍລິການຂົນສົ່ງຄວນຕິດຕັ້ງລະບົບ GPS ໃນການຕິດຕາມ ແລະ ຄວບຄຸມການປະຕິບັດງານຂອງພະນັກງານຂົນສົ່ງສິນຄ້າ ເພື່ອສະດວກໃນການຕິດຕາມພາຫະນະຂົນສົ່ງ ແລະ ສິນຄ້າ ໃນລະຫວ່າງການຂົນສົ່ງສາມາດຫຼຸດຄວາມເສຍຫາຍຂອງສິນຄ້າໄດ້.

### 3.6.6 ແນວທາງໃນການແກ້ໄຂດ້ານໄລຍະເວລາໃນການຂົນສົ່ງຊັກຊ້າ

ແນວທາງໃນການແກ້ໄຂດ້ານດ້ານໄລຍະເວລາໃນການຂົນສົ່ງທີ່ຊ້າ ຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າແມ່ນຄວນມີການແບ່ງພູມີພາກໃນການຂົນສົ່ງ, ຈັດຕາຕະລາງໃນການຂົນສົ່ງໄວ້ລ່ວງໜ້າ, ໃຊ້ຮູບແບບໃນການຂົນສົ່ງໃຫ້ສອດຄ່ອງສິນຄ້າ ແລະ ພາກພື້ນ, ສ້າງແຜນກໍານົດເວລາໃນການຂົນສົ່ງແຕ່ລະເສັ້ນທາງ, ແບ່ງແຂວງໃນການຂົນສົ່ງສິນຄ້າ, ແບ່ງປະເທດໃນການຂົນສົ່ງສິນຄ້າ. ດັ່ງນັ້ນ, ທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າເພື່ອແກ້ໄຂດ້ານໄລຍະເວລາໃນການຂົນສົ່ງທີ່ຊ້າ ອີງກອນຄວນແບ່ງພູມມີພາກໃນການຂົນສົ່ງອອກເປັນແຕ່ຂະຂົງເຂດ ຫຼື ແຕ່ລະພາກຢ່າງລະອຽດເນື່ອງຈາກວ່າ ແຕ່ລະເຂດມີພູມີພາກທີ່ແຕກຕ່າງກັນໃຊ້ໄລຍະເວລາໃນການເດີນທາງທີ່ແຕກຕ່າງກັນ.

### 3.3.7 ແນວທາງໃນການແກ້ໄຂດ້ານຍານພະຫະນະໃນການຂົນສົ່ງບໍ່ພຽງພໍ

ແນວທາງໃນການແກ້ໄຂດ້ານດ້ານໄລຍະເວລາໃນການຂົນສົ່ງທີ່ຊ້າ ຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຈະຕ້ອງເຊົ່າພາຫະນະຈາກທຸລະກິດອື່ນ ຫຼື ບໍລິສັດ, ມີຄວນຍານພາຫະນະສໍາຮອງໃນການຂົນສົ່ງ, ຄວນມີການຈັດຕັ້ງເຄືອຂ່າຍໃນການບໍລິການຂົນສົ່ງສິນຄ້າຮ່ວມກັບທຸລະກິດຂົນສົ່ງອື່ນ. ດັ່ງນັ້ນ, ທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າເພື່ອແກ້ໄຂດ້ານຍານພາຫະນະໃນການຂົນສົ່ງບໍ່ພຽງພໍບໍລິສັດຈະເຊົ້າຍານພາຫະນະຈາກທຸລະກິດອື່ນ ຫຼື ບໍລິສັດອື່ນຫຼາຍກວ່າຈະມີຍານພາຫະນະສໍາຮອງໄວ້ເນື່ອງຈາກວ່າ ຖ້າມີຍານພາຫະນະສໍາຮອງຈະເຮັດໃຫ້ມີຕົ້ນທຶນອື່ນ ຫຼື ບໍລິສັດອື່ນຫຼາຍກວ່າຈະມີຍານພາຫະນະສໍາຮອງໄວ້ເນື່ອງຈາກວ່າຖ້າມີຍານພາຫະນະສໍາຮອງຈະເຮັດໃຫ້ມີຕົ້ນທຶນທີ່ໃຊ້ໃນການລົງທຶນສູງຂຶ້ນ.

## 4. ວິພາກຜົນ

ຈາກຜົນການສຶກສາບັນຫາທີ່ເປັນຜົນກະທົບຕໍ່ກັບການດໍາເນີນທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າພາຍໃນ

ແຂວງ ສະຫວັນນະເຂດ ພົບວ່າ ຂາດການສະໜັບສະໜູນຈາກພາກລັດເປັນຕົ້ນແມ່ນສິ່ງອຳນວຍຄວາມສະດວກໃນການກໍ່ສ້າງໂຄງລ່າງພື້ນຖານເຊັ່ນຖະໜົນຫົນທາງມີການເປ່ເພຫຼາຍ, ການຕັ້ງດ່ານຂອງເຈົ້າໜ້າທີ່, ການເຂົ້າເຖິງແຫຼ່ງທຶນຍັງມີຄວາມຈຳກັດ, ການດຶງດູດການລົງທຶນຂອງຕ່າງປະເທດເຂົ້າມາລົງທຶນເປັນຈຳນວນຫຼາຍເຮັດໃຫ້ທຸລະກິດພາຍໃນທີ່ເປັນທຸລະກິດຂະໜາດນ້ອຍບໍ່ສາມາດທີ່ຂະແຂ່ງຂັນທຸລະກິດຂະໜາດໃຫຍ່ໄດ້ ລັດຖະບານຄວນມີການຈຳກັດ ແລະ ຄວນມີການສົ່ງເສີມການລົງທຶນພາຍໃນໃຫ້ຫຼາຍຂຶ້ນ ຊຶ່ງມີການສຶກສາອື່ນທີ່ຄ້າຍຄືກັນເຊັ່ນ: ໄຊສັກດາ ຕານລະມະນີ (2019) ພົບວ່າ: ບັນຫາໃນການປະກອບທຸລະກິດແມ່ນທາງດ້ານນະໂຍບາຍຂອງພັກ-ລັດ, ປັດໄຈທາງດ້ານຜູ້ປະກອບການ, ບັນຫາທາງດ້ານການເງິນ ແລະ ບັນຫາທາງດ້ານສ່ວນປະສົມທາງການຕະຫຼາດ, ຈາກຜົນການສຶກສາແນວທາງໃນການປັບໂຕຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ ຂະໜາດນ້ອຍ-ຂະໜາດກາງ ພາຍໃນ ແຂວງສະຫວັນນະເຂດ ພົບວ່າ ການປັບໂຕຂອງທຸລະກິດຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງຄື: ປະຕິບັດຕາມກົດລະບຽບ, ກົດໝາຍຂອງລັດ, ໃຫ້ຄວາມຮ່ວມມືໃນການສົ່ງເສີມການຂົນສົ່ງພາຍໃນ, ສ້າງສູນລວບລວມ ແລະ ກະຈາຍສິນຄ້າ, ບັນດາບໍລິສັດຕ້ອງມີການຕົກລົງກັນ ແລະ ຄວນແບ່ງພູມມີພາກໃນການຂົນສົ່ງ, ຈັດຕາຕະລາງໃນການຂົນສົ່ງໄວ້ລ່ວງໜ້າ, ໃຊ້ຮູບແບບໃນການຂົນສົ່ງໃຫ້ແທດເໝາະກັບພູມີພາກ ແລະ ສິນຄ້າ, ຄວນຄັດເລືອກເອົາບຸກຄະລາກອນຜູ້ທີ່ມີຄວາມຊຳນານງານ, ຈັດການຝຶກອົບຮົມເປັນປະຈຳ, ຄວນມີສິນຄ້າຂົນສົ່ງທັງຂາໄປ ແລະ ຂາກັບ ເພື່ອຫຼຸດຜ່ອນການແລ່ນລົດຖ້ຽວເປົ່າ, ການຂົນສົ່ງແບບເຕັມຄັນ (Full Truck load). ຊຶ່ງການສຶກສາອື່ນມີຜົນລັກສະນະທີ່ຄ້າຍຄືກັນເຊັ່ນ: ສາຊະກອນ ກິດຊະນະສະຖຽນ (2013) ພົບວ່າ ສະພາບທຸລະກິດບໍລິການຮັບຈ້າງຂົນສົ່ງ ຂະໜາດນ້ອຍ-ຂະໜາດກາງ ເປັນທຸລະກິດຮັບຈ້າງຂົນສົ່ງສິນຄ້າໄປຍັງປາຍທາງໂດຍກົງ, ລະບົບທີ່ນຳໃຊ້ເຂົ້າໃນການຂົນສົ່ງແມ່ນລະບົບໂລຈິດສະຕິກ ແລະ ລະບົບການດຳເນີນງານທົ່ວໄປ, ສິນຄ້າທີ່ຂົນສົ່ງແມ່ນສິນຄ້າທົ່ວໄປ ແລະ ອຸປະກອນລົດຍົນ, ບັນຫາທີ່ເປັນຜົນກະທົບຄືດ້ານບຸກຄະລາກອນ, ການສິ້ນເປືອງເຊື້ອໄຟ, ການຂາດການສະໜັບສະໜູນຈາກພາກລັດ, ລາຄາການຈັດສົ່ງບໍ່ເປັນມາດຕະຖານ, ຍານພາຫະນະໃນການຂົນສົ່ງບໍ່ພຽງພໍ. ນັດຖະພົນ ຊຸມແສງ (1998) ພົບວ່າ ທຸລະກິດໃຫ້ບໍລິການຂົນສົ່ງເຮັດການຂົນສົ່ງສິນຄ້າໄປຍັງປາຍທາງໂດຍກົງ, ທຸລະກິດໃຫ້ບໍລິການຂົນສົ່ງຂະໜາດກາງແມ່ນມີກຂົນສົ່ງສິນຄ້າຫຼາຍກວ່າຂະໜາດນ້ອຍ, ມີການນຳໃຊ້ເຕັກໂນໂລຊີເຂົ້າມາໃຊ້ເພື່ອອຳນວຍຄວາມສະດວກໃນການຂົນສົ່ງ. ທະນັດຊາ ບິນດູ ແລະ ຊູຕິມາ ຫວັງເບັນນັດ (2013) ພົບວ່າ ຄວາມສາເລັດຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງດ້ານຄວາມໝັ້ນຄົງຂອງກິດຈະການຄື: ລະບົບການຕະຫຼາດ, ລະບົບລູກຄ້າ, ລະບົບເຕັກໂນໂລຊີ, ລະບົບການເງິນ, ລະບົບບຸກຄະລາກອນ. ບຸນຊົບ ພານິດການ (2011) ໄດ້ຂຽນໄວ້ວ່າ ການນຳເຂົ້ານ້ຳມັນເຊື້ອໄຟພາຍໃນປະເທດເພື່ອບໍລິໂພກພານໃນປະເທດ ປະລິມານລົດບັນທຸກທີ່ຫຼາຍຂຶ້ນຕາມປະລິມານສິນຄ້າທີ່ຂົນສົ່ງສອດຄ່ອງກັບການສຳຫຼວດຂະບວນການຂົນສົ່ງທີ່ມີປະສິດທິພາບ ແມ່ນຕ້ອງມີສິນຄ້າທັງຂາໄປ-ຂາກັບ. ສົມຊາຍ ປະຖົມສິລິ (2009) ເມື່ອພິຈາລະນາເຖິງປະສິດທິພາບໃນການໃຊ້ພະລັງງານແຕ່ລະຮູບແບບການຂົນສົ່ງ ຈະພົບວ່າຮູບແບບການຂົນສົ່ງທາງນ້ຳເປັນຮູບແບບທີ່ມີປະສິດທິພາບຈາກການໃຊ້ພະລັງງານດີທີ່ສຸດ (ປະຢັດນ້ຳມັນ, ບໍ່ມີບັນຫາພາວະມົນລະພິດ, ບໍ່ມີບັນຫາການຈໍລະຈອນ).

## 5. ສະຫຼຸບ

ການສຶກສາສະພາບທົ່ວໄປ, ບັນຫາທີ່ເປັນອຸປະສັກຂອງຜູ້ປະກອບການທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າພາຍໃນແຂວງ ສະຫວັນນະເຂດ ເຊິ່ງປະກອບມີກຸ່ມຕົວຢ່າງບໍລິສັດຂົນສົ່ງທັງໝົດ 17 ບໍລິສັດ, ພົບວ່າ ທຸລະກິດໃຫ້ບໍລິການຮັບຈ້າງຂົນສົ່ງສິນຄ້າອອກນອກປະເທດ ມີ 14 ບໍລິສັດ ແລະ ບໍລິສັດຂົນສົ່ງຮັບຈ້າງຂົນສິນຄ້າເຂົ້າມາໃນປະເທດມີ 13 ບໍລິສັດ, ໃນນັ້ນແມ່ນນາໃຊ້ລະບົບຂົນສົ່ງແບບ TMS ກວມເອົາຫຼາຍທີ່ສຸດເທົ່າກັບ 12 ບໍລິສັດ, ນຳໃຊ້ລະບົບ GPS ມີ 10 ບໍລິສັດ ນອກນັ້ນແມ່ນນາໃຊ້ລະບົບໂລຊິດສະຕິກ, ສຳລັບການຂົນສົ່ງພາຍໃນແມ່ນຂົນສົ່ງແຕ່ແຂວງ ສະຫວັນນະເຂດ ຫານະຄອນຫຼວງວຽງຈັນ ເປັນ

ສ່ວນຫຼາຍຮອງລົງມາແມ່ນຂົນສົ່ງໄປຍັງ ແຂວງ ຈຳປາສັກ (ເມືອງ ປາກເຊ) ແລະ ແຂວງ ອັດຕະປື ຕາມລຳດັບ, ສ່ວນການຂົນສົ່ງລະຫວ່າງປະເທດ ແລະ ຜ່ານແດນ ແມ່ນຂົນສົ່ງໄປຍັງ ປະເທດໄທ ແລະ ປະເທດ ສສ ຫວຽດນາມ, ສິນຄ້າທີ່ຂົນສົ່ງແມ່ນພືດພັນທາງການກະເສດ, ເຄື່ອງຈັກ ແລະ ອຸກອນການກໍ່ສ້າງ.

ບັນຫາທີ່ເປັນຜົນກະທົບຕໍ່ກັບການດຳເນີນທຸລະກິດທີ່ເຮັດໃຫ້ບໍລິການຂົນສົ່ງສິນຄ້າພາຍໃນ ແຂວງ ສະຫວັນນະເຂດ ພົບບັນຫາຄື: ການຂາດການສະໜັບສະໜູນຈາກພາກລັດ ມີໄລຍະເວລາໃນການຂົນສົ່ງສິນຄ້າຊັກຊ້າ ຫຼື ເວລາໃນການຂົນສົ່ງຈຳກັດ, ດ້ານບຸກຄະລາກອນ ແລະ ການສິ້ນເປືອງເຊື້ອໄຟ, ຂາດລະບົບການຈັດການການຂົນສົ່ງທີ່ດີໃນການປະກອບທຸລະກິດ, ພາຫະນະໃນການຈັດສົ່ງສິນຄ້າບໍ່ພຽງພໍ, ຂາດເຕັກໂນໂລຊີເພື່ອອຳນວຍຄວາມສະດວກຕໍ່ການຂົນສົ່ງ, ສິນຄ້າມີການເປ່ເພເສຍຫາຍ ຫຼື ສູນເສຍລະຫວ່າງການຂົນສົ່ງ ແລະ ລາຄາໃນການຈັດສົ່ງສິນຄ້າບໍ່ເປັນມາດຕະຖານ.

ແນວທາງການປັບຕົວແມ່ນແກ້ໄຂດ້ານບຸກຄະລາກອນໃນອົງກອນຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າເຊັ່ນ: ການຄັດເລືອກເອົາບຸກຄະລາກອນທີ່ມີຄວາມຊຳນານເຂົ້າມາເຮັດວຽກໃນອົງກອນແມ່ນຄວາມສຳຄັນຫຼາຍທີ່ສຸດ, ຈັດການຝຶກອົບຮົມ ແລະ ພັດທະນາຄຸນນະພາບພະນັກງານ, ການສ້າງຂວັນກາລັງໃຈ ແລະ ການການົດຕາແໜ່ງໜ້າທີ່ໃນການປະຕິບັດວຽກໃຫ້ຊັດເຈນ, ແກ້ໄຂດ້ານຄວາມສິ້ນເປືອງເຊື້ອໄຟຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ ຕ້ອງຂົນສົ່ງສິນຄ້າທັງຂາໄປ ແລະ ຂາກັບ, ຄຳນວນໄລຍະທາງ ແລະ ກຳນົດປະລິມານເຊື້ອເພີງທີ່ຈະໃຊ້ກ່ອນການຂົນສົ່ງ, ລັດຖະບານຄວນປັບປຸງເສັ້ນທາງການຈໍລະຈອນເພື່ອສະດວກໃນການຂົນສົ່ງ, ຄວນໃຫ້ຄວາມຮ່ວມມືກັບລັດຖະບານໃນການສົ່ງເສີມການຂົນສົ່ງສິນຄ້າທັງພາຍໃນ ແລະ ຕ່າງປະເທດ ເພື່ອຍົກລະດັບມາດຕະຖານການຂົນສົ່ງທີ່ດີຂຶ້ນ, ການແກ້ໄຂດ້ານການຂາດລະບົບການບໍລິຫານການຂົນສົ່ງຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຄື: ຄວນເພີ່ມລະບົບການຂົນສົ່ງຈາກສູນກະຈາຍສິນຄ້າໄປເຖິງຜູ້ຮັບ (ຮັບສິນຄ້າຈາກສູນກະຈາຍສິນຄ້າ ສົ່ງໃຫ້ລູກຄ້າຈົນເຖິງປາຍທາງ), ນຳເອົາລະບົບ TMS ແລະ C-MOVE ມາໃຊ້ ແລະ ເພີ່ມລະບົບຂົນສົ່ງຈາກຜູ້ຜະລິດເຖິງປາຍທາງ (ຮັບສິນຄ້າຈາກຕົ້ນທາງໄປເຖິງປາຍທາງ), ການແກ້ໄຂດ້ານສິນຄ້າມີຄວາມເປ່ເພເສຍຫາຍ ແລະ ສູນເສຍລະຫວ່າງການຂົນສົ່ງຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າເຊັ່ນ: ຕິດຕັ້ງລະບົບ GPS ໃນການຕິດຕາມ, ຄວບຄຸມການປະຕິບັດງານຂອງພະນັກງານຂົນສົ່ງສິນຄ້າ, ການແກ້ໄຂດ້ານດ້ານໄລຍະເວລາໃນການຂົນສົ່ງທີ່ຊ້າ ຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າແມ່ນຄວນມີການແບ່ງພູມີພາກໃນການຂົນສົ່ງ, ຈັດຕາຕະລາງໃນການຂົນສົ່ງໄວ້ລ່ວງໜ້າ, ໃຊ້ຮູບແບບໃນການຂົນສົ່ງໃຫ້ສອດຄ່ອງສິນຄ້າ ແລະ ພາກພື້ນ, ສ້າງແຜນກຳນົດເວລາໃນການຂົນສົ່ງແຕ່ລະເສັ້ນທາງ, ແບ່ງແຂວງໃນການຂົນສົ່ງສິນຄ້າ, ແບ່ງປະເທດໃນການຂົນສົ່ງສິນຄ້າ, ການແກ້ໄຂດ້ານດ້ານໄລຍະເວລາໃນການຂົນສົ່ງທີ່ຊ້າ ຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າ ຈະຕ້ອງເຊົ່າພາຫະນະຈາກທຸລະກິດອື່ນ ຫຼື ບໍລິສັດອື່ນ, ຄວນມີຍານພາຫະນະສຳຮອງໃນການຂົນສົ່ງ, ມີການຈັດຕັ້ງເຄືອຂ່າຍໃນການບໍລິການຂົນສົ່ງສິນຄ້າຮ່ວມກັບທຸລະກິດຂົນສົ່ງອື່ນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມ ນັກຄົ້ນຄວ້າວິໄຈຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ນຳມາປະກອບໃສ່ບົດຄົ້ນຄ້ວາວິໄຈດັ່ງກ່າວນີ້ ແມ່ນບໍ່ມີຄວາມຂັດແຍ່ງທາງຜົນປະໂຫຍດ ແລະ ບໍ່ໄດ້ເອື້ອຜົນປະໂຫຍດໃດໆກັບພາກສ່ວນໃດພາກສ່ວນໜຶ່ງ, ຫາກກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບທັງໝົດ.

## 7. ຄຳຂອບໃຈ

ບົດຄົ້ນຄ້ວາວິໄຈນີ້ສຳເລັດລົງໄດ້ ແມ່ນຍ້ອນໄດ້ຮັບການສະໜັບສະໜູນທຶນຈາກ ມະຫາວິທະຍາໄລສະຫວັນນະເຂດ ງົບປະມານລັດ ປີ 2019. ດັ່ງນັ້ນ, ທາງທີມງານຄົ້ນຄ້ວາວິໄຈ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈມາຍັງມະຫາວິທະຍາໄລສະຫວັນນະເຂດ ທີ່ເຮັດໃຫ້ການຄົ້ນຄ້ວາວິໄຈໃນຄັ້ງນີ້ສຳເລັດໄປໄດ້ດ້ວຍດີ.

## 8. ເອກະສານອ້າງອີງ

ຈັດຕຸລົງ ເພີນທັດ. (2017). ການບໍລິຫານໂລຊິດສະຕິກ ແລະ ຊັບພລາຍເຊນ, ວິທະຍາໄລໂລຊິດສະຕິກ

ແລະ ຊັບພລາຍເຊນ, ມະຫາວິທະຍາໄລລາດຊະພັດ ສອນສຸມັນທາ.

ສາຊະກອນ ກິດຊະນະສະຖຽນ . (2013). ແນວທາງການປັບໂຕຂອງທຸລະກິດຮັບຈ້າງຂົນສົ່ງຂະໜາດກາງ ແລະ ຂະໜາດນ້ອຍກັບການເຂົ້າສູ່ປະຊາຄົມເສດຖະກິດອາຊຽນ.

ໄຊສັກດາ ຕານລະມະນີ. (2019). ບັນຫາທີ່ມີຜົນກະທົບຕໍ່ການປະກອບທຸລະກິດ ຂະໜາດນ້ອຍ-ຂະໜາດກາງ ໃນເທດສະບານນະຄອນໄກສອນ ແຂວງສະຫວັນນະເຂດ, ຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລສະຫວັນນະເຂດ.

ທະນັດຊາ ບິນດູ ແລະ ຊູຕິມາ ຫວັງເບັນນັດ. (2013). ປັດໄຈແວດລ້ອມທາງທຸລະກິດທີ່ມີອິດທິພົນຕໍ່ຄວາມສໍາເລັດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງໃນເມືອງຫາດໃຫຍ່ ແຂວງສົງຂາ.

ປາໂພປະພົນ ເຕີມທຣິກິດ. (2013). ປັດໄຈທີ່ສົ່ງຜົນກະທົບຕໍ່ການດໍາເນີນງານ ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ກໍລະນີສຶກສາອຸດສາຫະກໍາເຄື່ອງໃຊ້ໄຟຟ້າ.

ພຣິຢາ ສະເຫຼີມບຸນ. (2015). ການຈັດການບັນຫາທຸລະກິດ ແລະ ຄຸນນະພາບງານທາງການເງິນຂອງທຸລະກິດຂະໜາດນ້ອຍ ແລະ ກາງໃນເຂດຕາເວັນອອກ.

ຕາຕະລາງທີ 1: ສະພາບຂອງທຸລະກິດໃຫ້ບໍລິການຂົນສົ່ງສິນຄ້າຂະໜາດນ້ອຍ-ຂະໜາດກາງ

| ລໍາດັບ | ລາຍການ | ຈໍານວນ (ບໍລິສັດ) | ສ່ວນຮ້ອຍ (%) |
|---|---|---|---|
| 1 | ທຸລະກິດຮັບຈ້າງຂົນສົ່ງສິນຄ້າອອກນອກປະເທດ | 14 | 36.84 |
| 2 | ທຸລະກິດຮັບຈ້າງຂົນສົ່ງສິນຄ້າເຂົ້າມາໃນປະເທດ | 12 | 31.58 |
| 3 | ລະບົບ TMS | 12 | 44.44 |
| 4 | ລະບົບ GPS | 10 | 37.04 |
| 5 | ນະຄອນຫຼວງ | 11 | 35.48 |
| 6 | ປາກເຊ | 10 | 32.26 |
| 7 | ໄທ | 14 | 51.81 |
| 8 | ຫວຽດນາມ | 13 | 48.14 |
| 9 | ພຶດພັນທາງການກະເສດ | 11 | 28.95 |
| 10 | ອຸປະກອນກໍ່ສ້າງ | 9 | 23.68 |

ແຫຼ່ງຂໍ້ມູນ: ຈາກການລົງສໍາພາດຜູ້ປະກອບການ ໃນຄັ້ງວັນທີ 25 ສິງຫາ - 25 ກັນຍາ 2019

ຕາຕະລາງ 2: ຜົນກະທົບໃນການດາເນີນທຸລະກິດຂອງບໍລິສັດ

| ລໍາດັບ | ລາຍການ | ຈໍານວນ (ບໍລິສັດ) | ສ່ວນຮ້ອຍ (%) |
|---|---|---|---|
| 1 | ດ້ານບຸກຄະລາກອນ | 10 | 13.16 |
| 2 | ຂາດການສະໜັບສະໜູນຈາກພາກລັດ | 15 | 19.74 |
| 3 | ພາຫະນະໃນການຈັດສົ່ງສິນຄ້າບໍ່ພຽງພໍ | 7 | 9.21 |
| 4 | ຂາດລະບົບການຈັດການຂົນສົ່ງທີ່ດີໃນການດໍາເນີນທຸລະກິດ | 8 | 10.53 |
| 5 | ຂາດເທັກໂນໂລຊີເພື່ອອໍານວຍຄວາມສະດວກໃນການຂົນສົ່ງ | 5 | 6.58 |
| 6 | ສິນຄ້າມີການເປເພເສຍຫາຍ ຫຼື ສູນເສຍ ລະຫວ່າງການຂົນສົ່ງ | 4 | 5.26 |
| 7 | ໄລຍະເວລາໃນການຂົນສົ່ງສິນຄ້າຊັກຊ້າ ຫຼື ເວລາໃນການຂົນສົ່ງຈໍາກັດ | 14 | 18.42 |
| 8 | ການສິ້ນເປືອງເຊື້ອໄຟ | 10 | 13.16 |

| | | | |
|---|---|---|---|
| 9 | ລາຄາການຈັດສົ່ງສິນຄ້າບໍ່ເປັນມາດຕະຖານ | 3 | 3.95 |

ແຫຼ່ງຂໍ້ມູນ: ຈາກການລົງສໍາພາດຜູ້ປະກອບການ ໃນຄັ້ງວັນທີ 25 ສິງຫາ - 25 ກັນຍາ 2019

ຕາຕະລາງທີ 3: ແນວທາງໃນການປັບໂຕທາງດ້ານບຸກຄະລາກອນ

| ລໍາດັບ | ລາຍການ | ຈໍານວນ(ບໍລິສັດ) | ສ່ວນຮ້ອຍ(%) |
|---|---|---|---|
| 1 | ການຈັດພິງອີງກອນ | 2 | 8.33 |
| 2 | ຄັດເລືອກບຸກຄະລາກອນຜູ້ມີຄວາມຊໍານານ | 7 | 29.17 |
| 3 | ຈັດຝຶກອົບຮົມ ແລະ ພັດທະນາຄຸນນະພາບຂອງພະນັກງານ | 4 | 16.67 |
| 4 | ເຊື່ອມຄວາມສາມັກຄີແລກປ່ຽນຂ່າວສານການຂົນສົ່ງສິນຄ້າພາຍໃນ ແລະຕ່າງປະເທດ | 3 | 12.50 |
| 5 | ການສ້າງຂັວນ ແລະ ກໍາລັງໃຈ | 4 | 16.67 |
| 6 | ການກໍານົດຕໍາແໜ່ງ ແລະ ໜ້າທີ່ໃຫ້ຊັດເຈນ | 4 | 16.67 |

ແຫຼ່ງຂໍ້ມູນ: ຈາກການລົງສໍາພາດຜູ້ປະກອບການ ໃນຄັ້ງວັນທີ 25 ສິງຫາ - 25 ກັນຍາ 2019